# STRENGTHENING JOURNALISM SKILLS AND CLIMATE AWARENESS THROUGH GAMCIL TRAINING

**Ms. Philavanh Silixay** lives in Donmai Village, Xayaboury District, Laos, where she works as a speaker and reporter at the Xayaboury Provincial Department of Information, Culture and Tourism. Married with two daughters, Philavanh is passionate about her role as a journalist and is dedicated to informing the public, especially those who may not have access to important information.




In October-November 2024, Philavanh had the opportunity to participate in the “Reporting Green Issues” training workshop, part of the Green Action through Media, Mass Organization, and Civil Society in Laos (GAMCIL) Project, funded by the European Union. This training gathered journalists from across the north, central, and south regions of Laos to enhance their skills in reporting on environmental and climate change issues.



Before participating in the GAMCIL workshop, Philavanh had already taken part in a news writing and reporting training organized by the Lao National Television Station, which helped improve her basic journalistic skills. “Before the training, I didn’t have much experience, but after attending the program, I gained many useful skills that made my work faster and more efficient,” she explained. Her love for journalism and a desire to inform the public about crucial issues led her to pursue this career. She firmly believes in the power of the media to bring important information to those who need it most.



The GAMCIL training workshop, however, provided her with new tools and insights that significantly improved her reporting skills, particularly in the area of climate change. “The most impressive lesson for me was learning how to create more interesting and attractive news headlines, especially for social media platforms like Facebook. These skills will help make the news more engaging for the audience,” she shared.

Philavanh found the training extremely beneficial for her work in both news writing and producing radio and TV programs. She plans to use these newly acquired skills to better inform the public, particularly about climate change and environmental issues. "I'll use the lessons I've learned to help educate people, especially on issues like pollution, which many may not be fully aware of. There needs to be more information shared through radio and TV programs to help people understand the dangers of climate change," she said.



Her focus is on farmers, a group she believes needs more awareness about the environmental risks tied to climate change. "Many farmers don't realize how their activities can contribute to natural disasters, and I want to share information with them to help them understand the long-term consequences of their actions," she emphasized.



Philavanh is especially concerned about the environmental issues in her own province, where poverty drives families to engage in deforestation to make room for cassava farms and other crops. She believes that by using media effectively, she can help bring attention to these problems and encourage solutions. "I want to use the media to promote environmental protection, so more people have access to information. Through radio and TV programs, I hope to reach a wider audience and inspire change."

Reflecting on the training, Philavanh is grateful for the opportunity to improve her skills and knowledge. "I'm very happy to have participated in this training workshop. I've learned many new things, and I would love to take this program again in the future. I want to thank the GAMCIL Project and the donor for making this possible," she concluded.



With the new tools and knowledge, she gained from the GAMCIL workshop, Philavanh is ready to make a lasting impact in her community by promoting environmental awareness and climate action through radio, TV, and social media. Her dedication to using the power of media to inform and educate the public is a testament to the growing importance of journalism in tackling climate change.

## ໂຄງການ ແກມຊີວ ສົ່ງເສີມພັດທະນາທັກສະໃຫ້ສື່ມວນຊົນ ແລະ ປູກຈິດສຳນຶກກ່ຽວກັບສະພາບດິນຟ້າອາກາດ ໂດຍການຝຶກອົບຮົມ



**ທ່ານນາງ ພິລາວັນ ສີລິໄຊ** ເປັນພະນັກງານນັກຂ່າວ-ໂຄສົກ ປະຈຳຢູ່ ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງໄຊຍະບູລີ. ປັດຈຸບັນຢູ່ ບ້ານດອນໃໝ່, ເມືອງໄຊຍະບູລີ, ແຂວງໄຊຍະບູລີ, ໃນ ສປປ ລາວ, ລາວໄດ້ແຕ່ງງານແລ້ວ ແລະ ມີລູກສາວ 2 ຄົນ. ທ່ານນາງ ພິລາວັນ ມີຄວາມຫ້າວຫັນໃນໜ້າທີ່ວຽກງານສື່ມວນຂອງຕົນເອງ ແລະ ໄດ້ເຜີຍແຜ່ຂໍ້ມູນຂ່າວສານຕ່າງໆອອກສູ່ສັງຄົມຢ່າງເປັນປົກກະຕິ ໂດຍສະເພາະລາວໄດ້ສຸມໃສ່ປະຊາຊົນຜູ້ທີ່ອາດຈະຍັງບໍ່ທັນໄດ້ເຂົ້າເຖິງແຫຼ່ງຂໍ້ມູນທີ່ສຳຄັນຕ່າງໆ.

ໃນເດືອນ ຕຸລາ ຫາ ພະຈິກ ປີ 2024, ທ່ານນາງ ພິລາວັນ ໄດ້ມີໂອກາດເຂົ້າຮ່ວມການຝຶກອົບຮົມ ໃນຫົວຂໍ້ "ການລາຍງານຂ່າວບັນຫາສີຂຽວ" ໃຫ້ແກ່ນັກຂ່າວ ເຊິ່ງຈັດຂຶ້ນໂດຍ ໂຄງການ ສ້າງຄວາມເຂັ້ມແຂງໃຫ້ແກ່ສື່ມວນຊົນ ໂດຍໄດ້ຮັບການສະໜັບສະໜູນຈາກ ສະຫະພາບ ເອີຣົບ ໂດຍການມີສ່ວນຮ່ວມຂອງອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງທາງສັງຄົມ ເພື່ອການພັດທະນາສີຂຽວ ໃນ ສປປ ລາວ (GAMCIL). ການຝຶກອົບຮົມຄັ້ງໃນນີ້, ມີຕົວແທນນັກຂ່າວຈາກຫຼາຍແຂວງທົ່ວປະເທດ ຄື ພາກເໜືອ, ພາກກາງ ແລະ ພາກໃຕ້ ເຂົ້າຮ່ວມ ແລະ ຮຽນຮູ້ແລກປ່ຽນເຕັກນິກການລາຍງານຂ່າວກ່ຽວກັບບັນຫາສິ່ງແວດລ້ອມ ແລະ ການປ່ຽນແປງຂອງດິນຟ້າອາກາດ.



ກ່ອນເຂົ້າຮ່ວມຝຶກອົບຮົມນຳ ໂຄງການ GAMCIL ໃນຄັ້ງນີ້, ທ່ານນາງ ພິລາວັນ ເຄີຍໄດ້ເຂົ້າຮ່ວມຝຶກອົບຮົມທັກສະການຂຽນຂ່າວ ແລະ ລາຍງານຂ່າວ ໜຶ່ງຄັ້ງເຊິ່ງຈັດໂດຍສະຖານີໂທລະພາບແຫ່ງຊາດລາວ ແລະ ນີ້ກໍ່ໄດ້ຊ່ວຍພັດທະນາທັກສະດ້ານສື່ມວນຊົນຂັ້ນພື້ນຖານຂອງລາວໃຫ້ດີຂຶ້ນ.

ທ່ານນາງ ພິລາວັນ ກ່າວວ່າ "ກ່ອນເຂົ້າຮ່ວມຝຶກອົບຮົມນຳ ໂຄງການ GAMCIL ຂ້າພະເຈົ້າຍັງບໍ່ທັນມີປະສົບການຫຼາຍ ແຕ່ເມື່ອໄດ້ ເຂົ້າຮ່ວມຝຶກອົບຮົມຄັ້ງນີ້ ຂ້າພະເຈົ້າໄດ້ຮຽນຮູ້ທັກສະໃໝ່ຫຼາຍຢ່າງເຊິ່ງເປັນປະໂຫຍດຫຼາຍ ແລະ ຊ່ວຍເຮັດໃຫ້ການຂຽນຂ່າວຂອງຂ້າພະເຈົ້າໄວຂຶ້ນ ແລະ ມີປະສິດທິພາບຫຼາຍຂຶ້ນ". ຍ້ອນຄວາມມັກຮັກວຽກດ້ານສື່ມວນຊົນ ຂອງທ່ານນາງ ພິລາວັນ ແລະ ຄວາມຕ້ອງການທີ່ຈະເຜີຍແຜ່ຂໍ້ມູນຂ່າວສານໃຫ້ປະຊາຊົນໄດ້ຮັບຮູ້ກ່ຽວກັບບັນຫາສຳຄັນຕ່າງໆ ໄດ້ເຮັດໃຫ້ລາວຕັດສິນໃຈເລືອກເຮັດອາຊີບນັກຂ່າວ. ລາວເຊື່ອໝັ້ນວ່າພະລັງຂອງສື່ມວນຊົນ ຈະສາມາດຊ່ວຍສົ່ງຕໍ່ຂໍ້ມູນຂ່າວສານທີ່ເປັນຄວາມຈິງ ແລະ ມີຄວາມສຳຄັນໄປຮອດໄປເຖິງປະຊາຊົນໄດ້ຢ່າງທົ່ວເຖິງ.



ການເຂົ້າຮ່ວມຝຶກອົບຮົມນຳ ໂຄງການGAMCIL ໄດ້ເຮັດໃຫ້ ທ່ານນາງ ພິລາວັນ ມີໂອກາດຮຽນຮູ້ການນຳໃຊ້ເຄື່ອງມືແບບໃໝ່ເຂົ້າໃນການລາຍງານຂ່າວ ເຊິ່ງມີຄວາມສຳຄັນຫຼາຍ ມັນໄດ້ຊ່ວຍປັບປຸງທັກສະການລາຍງານຂອງລາວໃຫ້ດີຂຶ້ນ ໂດຍສະເພາະຂ່າວກ່ຽວກັບການປ່ຽນແປງດິນຟ້າອາກາດ. "ບົດຮຽນທີ່ຂ້າພະເຈົ້າປະທັບໃຈທີ່ສຸດຈາກການຝຶກອົບຮົມຄັ້ງນີ້ແມ່ນການຮຽນຮູ້ວິທີສ້າງຫົວຂໍ້ຂ່າວໃຫ້ໜ້າສົນໃຈ ແລະ ດຶງດູດຜູ້ອ່ານຜູ້ຊົມ ໂດຍສະເພາະການຂຽນຂ່າວສຳລັບລົງສື່ສັງຄົມອອນລາຍຕ່າງໆ ເປັນຕົ້ນແມ່ນເຟສບຸກ. ທັກສະເຫຼົ່ານີ້ຈະຊ່ວຍເຮັດໃຫ້ບົດຂ່າວຂອງຂ້າພະເຈົ້າສາມາດດຶງດູດຜູ້ອ່ານຜູ້ຊົມໄດ້ຫຼາຍຂຶ້ນ," ທ່ານນາງ ພິລາວັນ ກ່າວດ້ວຍຄວາມດີໃຈ.



ທ່ານນາງ ພິລາວັນ ເຫັນວ່າການຝຶກອົບຮົມຄັ້ງນີ້ມີປະໂຫຍດຫຼາຍສຳລັບວຽກງານຂອງລາວ ທັງໃນການຂຽນຂ່າວ ແລະ ການຜະລິດລາຍການວິທະຍຸ ແລະ ໂທລະພາບ. ລາວຈະນຳເອົາຄວາມຮູ້ໃໝ່ໆເຫຼົ່ານີ້ໄປເຜີຍແຜ່ໃຫ້ປະຊາຊົນໄດ້ຮັບຮູ້ນຳ ໂດຍສະເພາະຄວາມຮູ້ກ່ຽວກັບການປ່ຽນແປງດິນຟ້າອາກາດ ແລະ ບັນຫາສິ່ງແວດລ້ອມ. "ຂ້າພະເຈົ້າຈະນຳໃຊ້ບົດຮຽນທີ່ໄດ້ຮຽນມາເພື່ອຊ່ວຍສຶກສາອົບຮົມປະຊາຊົນ ໂດຍສະເພາະແມ່ນຄວາມຮູ້ກ່ຽວກັບບັນຫາທາງດ້ານມົນລະພິດ ເຊິ່ງຫຼາຍຄົນອາດຈະຍັງບໍ່ທັນໄດ້ຮັບຮູ້ຢ່າງລະອຽດ. ມັນມີຄວາມຈຳເປັນຫຼາຍທີ່ຈະຕ້ອງມີຂໍ້ມູນຂ່າວສານເຜີຍແຜ່ລົງໃນລາຍການວິທະຍຸ ແລະ ໂທລະພາບ ຢ່າງພຽງພໍ ເພື່ອຊ່ວຍໃຫ້ປະຊາຊົນໄດ້ຮັບຮູ້ ແລະ ເຂົ້າໃຈເຖິງອັນຕະລາຍຂອງການປ່ຽນແປງສະພາບດິນຟ້າອາກາດ," ທ່ານນາງ ພິລາວັນ ກ່າວ.

ລາວໄດ້ ເຫັນວ່າ ຊາວກະສິກອນແມ່ນກຸ່ມທີ່ມີຄວາມຕ້ອງການຂໍ້ມູນຂ່າວສານກ່ຽວກັບຄວາມສ່ຽງດ້ານສິ່ງແວດລ້ອມທີ່ກ່ຽວຂ້ອງກັບການປ່ຽນແປງດິນຟ້າອາກາດ ຫຼາຍກ່ວາກຸ່ມອື່ນໆ. ລາວໄດ້ຢໍ້າວ່າ "ຊາວກະສິກອນຫຼາຍຄົນແມ່ນຍັງທັນບໍ່ຮູ້ວ່າກິດຈະກຳຖາງປ່າເຮັດໄຮ່ຂອງຕົນເອງ ເປັນສາເຫດໃຫ້ເກີດໄພທຳມະຊາດ. ສະນັ້ນ, ຂ້າພະເຈົ້າຈຶ່ງຢາກແບ່ງປັນຂໍ້ມູນເຫຼົ່ານີ້ໃຫ້ພວກເຂົາໄດ້ຮັບຮູ້ ເພື່ອຊ່ວຍໃຫ້ເຂົາເຈົ້າເຂົ້າໃຈຜົນສະທ້ອນໃນໄລຍະຍາວຂອງພຶດຕິກຳຂອງຕົນເອງ."



ທ່ານນາງ ພິລາວັນ ມີຄວາມເປັນຫ່ວງນຳບັນຫາສິ່ງແວດລ້ອມ ໃນແຂວງຂອງຕົນເອງ ເຊິ່ງລາວກໍ່ຍັງເຫັນວ່າຄວາມທຸກຍາກໄດ້ເຮັດໃຫ້ຫຼາຍຄອບຄົວໄດ້ມີ ການຖາງປ່າເຮັດໄຮ່, ຕັດຕົ້ນໄມ້ ເພື່ອເຮັດສວນມັນຕົ້ນ ແລະ ປູກພືດຊະນິດອື່ນໆ. ລາວ ເຊື່ອວ່າການນຳໃຊ້ບົດບາດສື່ມວນຊົນຂອງຕົນຢ່າງມີປະສິດທິພາບ ຈະສາມາດເຮັດໃຫ້ຊາວກະສິກອນຫັນມາເອົາໃຈໃສ່ບັນຫາເຫຼົ່ານີ້ຫຼາຍຂຶ້ນ ແລະ ກ້າວໄປສູ່ການຫາວິທີທາງແກ້ໄຂຢ່າງເໝາະສົມ. "ຂ້າພະເຈົ້າຈະນຳໃຊ້ບົດບາດສື່ມວນຊົນຂອງຕົນເພື່ອສົ່ງເສີມການປົກປັກຮັກສາສິ່ງແວດລ້ອມ ໂດຍການເຜີຍແຜ່ຂໍ້ມູນຂ່າວສານຜ່ານລາຍການວິທະຍຸ ແລະ ໂທລະພາບ ໃຫ້ຫຼາຍຂຶ້ນ ເພື່ອຊ່ວຍໃຫ້ປະຊາຊົນໄດ້ເຂົ້າເຖິງຂໍ້ມູນຢ່າງກ້ວາງຂວາງ. ຂ້າພະເຈົ້າຫວັງວ່າວິທີນີ້ຈະຊ່ວຍໃຫ້ຂໍ້ມູນເຂົ້າເຖິງ ຜູ້ຊົມຜູ້ຟັງໄດ້ຫຼາຍຂຶ້ນ ແລະ ຈະຊ່ວຍກະຕຸ້ນໃຫ້ມີການປ່ຽນແປງໃນອະນາຄົດ."



ຫຼັງຈາກໄດ້ຮຽນຮູ້ທັກສະ ແລະ ຄວາມຮູ້ໃໝ່ຫຼາຍຢ່າງ ຈາກການຝຶກອົບຮົມຂອງໂຄງການGAMCIL ຕອນນີ້ ທ່ານນາງ ພິລາວັນ ກໍ່ພ້ອມແລ້ວທີ່ຈະປະກອບສ່ວນສ້າງຄວາມຍືນຍົງໃນຊຸມຊົນຂອງຕົນ ໂດຍການສົ່ງເສີມປູກຈິດສຳນຶກດ້ານສິ່ງແວດລ້ອມ ແລະ ດິນຟ້າອາກາດ ຜ່ານລາຍການວິທະຍຸ, ໂທລະພາບ ແລະ ສື່ສັງຄົມອອນລາຍຕ່າງໆ. ການອຸທິດຕົນຂອງ ລາວ ໃນການນຳໃຊ້ບົດບາດສື່ມວນຊົນຂອງຕົນ ເພື່ອເຜີຍແຜ່ຂໍ້ມູນຂ່າວສານ ແລະ ການໃຫ້ຄວາມຮູ້ແກ່ປະຊາຊົນ ແມ່ນເປັນສິ່ງທີ່ສະແດງໃຫ້ເຫັນເຖິງການເພີ່ມຂຶ້ນຂອງຄວາມສຳຄັນ ໃນວຽກງານສື່ມວນຊົນຕໍ່ກັບບັນຫາການປ່ຽນແປງຂອງສະພາບດິນຟ້າອາກາດ.